ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
============

ສຳນັກງານນາຍົກລັດຖະມົນຕີ                                        /ເລກທີ 175 /ນ.ຍ

# ດຳລັດ
# ວ່າດ້ວຍແຊັກ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 01/95/ສພຊ. ລົງວັນທີ 8 ມີນາ 1995;
- ອີງຕາມກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ ເລກທີ 05/ສພຊ ລົງວັນທີ 14 ຕຸລາ 1995;
- ອີງຕາມ ການສະເໜີຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ.

**ສຳນັກງານນາຍົກລັດຖະມົນຕີອອກດຳລັດ :**

## ໝວດທີ I
## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງຂອງດຳລັດ

ດຳລັດສະບັບນີ້ ກຳນົດລະບຽບການກ່ຽວກັບການອອກ, ການສັ່ງຈ່າຍ ແລະ ການໂອນແຊັກ, ການຈ່າຍເງິນຕາມແຊັກ, ສິດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ທີ່ມີການພົວພັນກັບແຊັກ ແນໃສ່ອຳນວຍຄວາມສະດວກ ແລະ ຄວາມປອດໄພໃນການຊຳລະ, ຫລຸດຜ່ອນການນຳໃຊ້ເງິນສົດ ແລະ ການພິມເງິນ, ເຮັດໃຫ້ເງິນກີບມີສະຖຽນລະພາບ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ.

**ມາດຕາ 2. ແຊັກ**

ແຊັກແມ່ນເອກະສານທີ່ເປັນເຄື່ອງມືຊຳລະແທນເງິນຊຶ່ງເຈົ້າຂອງບັນຊີໄດ້ສັ່ງໃຫ້ທະນາຄານ ຫລື ສະຖາບັນການເງິນອື່ນຈ່າຍເງິນທັນທີໃຫ້ຜູ້ຮັບເງິນ ຫລື ຈ່າຍໃຫ້ຜູ້ອື່ນຕາມຄຳສັ່ງຂອງຜູ້ຮັບເງິນ.

**ມາດຕາ 3. ການນຳໃຊ້ແຊັກ**

ແຊັກມີຄຸນຄ່າຄ້າຍຄືເງິນສົດ. ໃນເມື່ອຄູ່ສັນຍາຫາກໄດ້ຕົກລົງກັນແລ້ວ ຜູ້ເປັນເຈົ້າໜີ້ບໍ່ມີສິດປະຕິເສດການສຳລະໜີ້ດ້ວຍແຊັກ.

**ມາດຕາ 4. ຮູບແບບ ແລະ ເນື້ອໃນຂອງແຊັກ**

ແຊັກແມ່ນເອກະສານຊຶ່ງປະກອບດ້ວຍຮູບແບບ ແລະ ເນື້ອໃນຕົ້ນຕໍດັ່ງຕໍ່ໄປນີ້ :

- ຄຳວ່າ " ແຊັກ " ແລະ ເລກທີຂອງແຊັກ;
- ຊື່ທະນາຄານ ຫລື ສະຖາບັນການເງິນອື່ນທີ່ອອກແຊັກ;
- ຄຳສັ່ງຈ່າຍ ແລະ ຊື່ຜູ້ຮັບ;
- ຈຳນວນເງິນ ແລະ ສະກຸນເງິນທີ່ສັ່ງຈ່າຍ;
- ບ່ອນຈ່າຍເງິນ;
- ເລກໝາຍບັນຊີຂອງຜູ້ສັ່ງຈ່າຍ;
- ເລກລະຫັດຂອງແຊັກ;
- ວັນທີເຊັນແຊັກ;
- ລາຍເຊັນຂອງຜູ້ສັ່ງຈ່າຍ.

**ມາດຕາ 5. ປຶ້ມແຊັກ**

ປຶ້ມແຊັກປະກອບດ້ວຍໃບແຊັກທີ່ຂຽນຊື່ຂອງເຈົ້າຂອງບັນຊີແລະ ເລກທີອັນດຽວກັນກັບທົ່ວຂັ້ນຂອງປຶ້ມແຊັກ.

ປຶ້ມແຊັກນີ້ຕ້ອງມອບໃຫ້ເຈົ້າຂອງບັນຊີເປັນຜູ້ນຳໃຊ້;ທະນາຄານຈະບໍ່ໃຫ້ປຶ້ມແຊັກແກ່ຜູ້ທີ່ທະນາຄານຫ້າມສັ່ງຈ່າຍແຊັກຫລືຖອນປຶ້ມແຊັກຈາກຜູ້ທີ່ໄດ້ລະເມີດລະບຽບການນຳໃຊ້ແຊັກ.

ຜູ້ຖືປຶ້ມແຊັກຕ້ອງຮັກສາປຶ້ມແຊັກຂອງຕົນໃຫ້ດີ ໃນກໍລະນີມີການຕົກເຮ່ຍເສັຍຫາຍດ້ວຍຄວາມປະມາດເລີນເລີ້ຂອງຜູ້ກ່ຽວ ຜູ້ກ່ຽວຈະໄດ້ມີຄວາມຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເກີດຂຶ້ນ.

**ມາດຕາ 6. ຈຳນວນເງິນໃນແຊັກ**

ຈຳນວນເງິນໃນແຊັກແມ່ນໃຫ້ຂຽນເປັນຕົວເລກ ແລະ ຕົວໜັງສື, ຖ້າວ່າຈຳນວນເງິນເປັນຕົວເລກ ແລະ ຕົວໜັງສືຫາກບໍ່ກົງກັນທະນາຄານມີສິດສົ່ງແຊັກຄືນໃຫ້ ຜູ້ຖືແຊັກ.

**ມາດຕາ 7. ປະເພດຂອງແຊັກ**

ແຊັກປະກອບມີສາມປະເພດດັ່ງນີ້ :

- ແຊັກບຸກຄົນ ຊຶ່ງແມ່ນແຊັກສ່ວນຕົວ ຫລື ແຊັກຂອງນິຕິບຸກຄົນທີ່ເປັນເຈົ້າຂອງບັນຊີ;
- ແຊັກທະນາຄານ ຊຶ່ງແມ່ນທະນາຄານເອງເປັນເຈົ້າຂອງບັນຊີ;
- ແຊັກຂອງສະຖາບັນການເງິນອື່ນທີ່ໄດ້ຮັບອະນຸຍາດໃຫ້ອອກແຊັກ.

**ມາດຕາ 8. ຮູບການນຳໃຊ້ແຊັກ**

ຮູບການນຳໃຊ້ແຊັກມີດັ່ງນີ້ :

- ແຊັກບໍ່ບົ່ງຊື່ຜູ້ຮັບເງິນ ແມ່ນແຊັກທີ່ປະຫວ່າງເປົ່າ ຫລື ຂຽນວ່າ " ຈ່າຍໃຫ້ຜູ້ຖື " ຫລື " ຈ່າຍສົດ " ຊຶ່ງທະນາຄານຈະຕ້ອງຈ່າຍເງິນໃຫ້ຜູ້ທີ່ຖືແຊັກໄປນັ້ນໃນທັນໃດ;
- ແຊັກບົ່ງຊື່ຜູ້ຮັບເງິນ ແມ່ນແຊັກທີ່ຂຽນຊື່ຜູ້ທີ່ມີສິດຮັບເງິນ ແລະ ທະນາຄານຈະຈ່າຍເງິນ ໃຫ້ແຕ່ຜູ້ບົ່ງຊື່ເທົ່ານັ້ນ;

-ແຊັກທີ່ຈ່າຍເຂົ້າບັນຊີທົ່ວໄປແມ່ນແຊັກທີ່ມີຂີດສອງເສັ້ນຂະໜານຢູ່ແຈເທິງເບື້ອງຊ້າຍ ຢູ່ລະຫວ່າງສອງເສັ້ນຂະໜານດັ່ງກ່າວຈະຂຽນ " ຈ່າຍເຂົ້າບັນຊີເທົ່ານັ້ນ " ຫລື " ບໍ່ຂຽນຫຍັງໃສ່ " ໃຫ້ໂອນເຂົ້າບັນຊີຂອງຜູ້ຖືແຊັກຢູ່ໃນທະນາຄານໃດກໍ່ໄດ້;

-ແຊັກທີ່ຈ່າຍເຂົ້າບັນຊີສະເພາະແມ່ນແຊັກທີ່ຂີດສອງເສັ້ນຂະໜານຢູ່ແຈເທິງເບື້ອງຊ້າຍເຊິ່ງລະຫວ່າງກາງສອງເສັ້ນຂະໜານນັ້ນມີການບົ່ງຊື່ຂອງທະນາຄານໃດໜຶ່ງສະເພາະໃຫ້ໂອນເຂົ້າບັນຊີຂອງທະນາຄານທີ່ໄດ້ບົ່ງຊື່ໄວ້;

- ແຊັກເດີນທາງແມ່ນແຊັກທີ່ທະນາຄານເປັນຜູ້ອອກໃຫ້ຜູ້ຊື້ ຊຶ່ງສາມາດນຳໄປຊຳລະໜີ້ສິນ ຫລື ສະເໜີເບີກຈ່າຍເປັນເງິນສົດໄດ້ນຳທຸກທະນາຄານ ຫລື ສະຖາບັນການເງິນອື່ນ;
- ແລະ ຮູບການນຳໃຊ້ແຊັກອື່ນໆ.

**ມາດຕາ 9. ອາຍຸຂອງແຊັກ**

ແຊັກມີອາຍຸໜຶ່ງຮ້ອຍແປດສິບວັນ ນັບແຕ່ວັນທີ່ໄດ້ເຊັນສັ່ງຈ່າຍເປັນຕົ້ນໄປ. ແຊັກໝົດອາຍຸບໍ່ສາມາດເບີກເງິນໄດ້ ເວັ້ນເສັຍແຕ່ຜູ້ສັ່ງຈ່າຍຫາກຍິນຍອມຈ່າຍເງິນ. ຖ້າຫາກວ່າຜູ້ສັ່ງຈ່າຍບໍ່ຍິນຍອມຈ່າຍເງິນ, ຜູ້ຮັບແຊັກມີສິດຮ້ອງຟ້ອງຂໍຄ່າເສັຍຫາຍທາງແພ່ງ.

ຜູ້ຮັບແຊັກມີສິດສະເໜີຂໍເບີກເງິນນຳທະນາຄານບ່ອນຈ່າຍເງິນພາຍໃນແປດວັນ ນັບແຕ່ວັນສັ່ງຈ່າຍເປັນຕົ້ນໄປ. ຖ້າຫາກວ່າພາຍໃນເວລາກຳນົດດັ່ງກ່າວທະນາຄານບໍ່ສາມາດຈ່າຍເງິນຕາມແຊັກໄດ້ຍ້ອນວ່າເງິນບໍ່ມີໃນບັນຊີຂອງຜູ້ສັ່ງຈ່າຍ, ຜູ້ຮັບແຊັກມີສິດຮ້ອງຟ້ອງຜູ້ສັ່ງຈ່າຍໃນສະຖານອອກແຊັກບໍ່ມີເງິນ.

ໃນກໍລະນີຜູ້ຮັບແຊັກຫາກສະເໜີຂໍເບີກເງິນພາຍຫລັງແປດວັນ ແຕ່ບໍ່ກາຍຮ້ອຍແປດສິບວັນນັບແຕ່ມື້ສັ່ງຈ່າຍເປັນຕົ້ນໄປຖ້າຜູ້ກ່ຽວຫາກບໍ່ໄດ້ຮັບເງິນຈາກທະນາຄານຍ້ອນວ່າ ເງິນ

ບໍ່ມີໃນບັນຊີຂອງຜູ້ສັ່ງຈ່າຍ, ຜູ້ຮັບແຊັກຕ້ອງໄດ້ລໍຖ້າໄປອີກເຈັດວັນໃນກໍລະນີທີ່ຜູ້ສັ່ງຈ່າຍ ແລະ ຜູ້ຮັບແຊັກຫາກຢູ່ທ້ອງຖິ່ນດຽວກັນ ແລະ ສິບສີ່ວັນ ຖ້າວ່າຜູ້ສັ່ງຈ່າຍ ແລະ ຜູ້ຮັບແຊັກຫາກຢູ່ທ້ອງຖິ່ນຕ່າງກັນ. ຖ້າວ່າກາຍກຳນົດນີ້ແລ້ວຫາກຍັງບໍ່ທັນໄດ້ຮັບເງິນຜູ້ຮັບແຊັກຈຶ່ງມີສິດຮ້ອງຟ້ອງຜູ້ສັ່ງຈ່າຍ ໃນສະຖານສັ່ງຈ່າຍແຊັກບໍ່ມີເງິນ.

ໃນກໍລະນີຜູ້ຮັບແຊັກ ຫາກສະເໜີຂໍເບີກເງິນຊັກຊ້າຍ້ອນເຫດສຸດວິໄສ ພາໃຫ້ຜູ່ກ່ຽວບໍ່ສາມາດຂໍເບີກເງິນໄດ້ຕາມອາຍຸການຂອງແຊັກ. ຜູ້ຮັບແຊັກຕ້ອງສະເໜີຂໍເບີກເງິນນຳທະນາຄານ ບ່ອນຈ່າຍເງິນພາຍໃນກຳນົດສິບວັນ ນັບແຕ່ວັນທີ່ເຫດສຸດວິໄສໄດ້ສິ້ນສຸດແລ້ວ.

## ໝວດທີ II

## ຜູ້ເຂົ້າຮ່ວມໃນແຊັກ

### ມາດຕາ 10. ຜູ້ເຂົ້າຮ່ວມໃນແຊັກ

ຜູ້ເຂົ້າຮ່ວມໃນແຊັກປະກອບມີ :

- ຜູ້ສັ່ງຈ່າຍ;
- ຜູ້ຮັບແຊັກ;
- ຜູ້ຈ່າຍເງິນ;

ນອກນີ້ອາດຈະມີ :

- ຜູ້ສະຫລັກຫລັງແຊັກ;
- ຜູ້ຖືແຊັກ;
- ທະນາຄານຮັບແຊັກ;
- ສູນຊຳລະ;
- ຜູ້ຄ້ຳປະກັນ.

### ມາດຕາ 11. ຜູ້ສັ່ງຈ່າຍ

ຜູ້ສັ່ງຈ່າຍ ແມ່ນເຈົ້າຂອງບັນຊີ ຫລື ຜູ້ທີ່ໄດ້ຮັບມອບສິດຈາກເຈົ້າຂອງບັນຊີທີ່ສັ່ງໃຫ້ທະນາຄານ ຫລື ສະຖາບັນການເງິນອື່ນບ່ອນທີ່ຕົນມີບັນຊີເງິນຝາກ ຈ່າຍເງິນໃຫ້ບຸກຄົນໃດໜຶ່ງດ້ວຍການຫັກເງິນໃນບັນຊີຂອງຕົນເພື່ອຊຳລະ.

ບຸກຄົນທີ່ບໍ່ສາມາດເປັນຜູ້ສັ່ງຈ່າຍແຊັກມີຄື:

- ບຸກຄົນທີ່ທະນາຄານຫ້າມສັ່ງຈ່າຍແຊັກ;

- ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ;

-ຜູ້ທີ່ຢູ່ໃນພາວະຟື້ນຟູທຸລະກິດຫລືຢູ່ໃນລະຫວ່າງສໍາລະສະສາງເພື່ອຟື້ນຟູຖານະການເງິນ ເວັ້ນເສັຍແຕ່ໄດ້ຮັບອະນຸຍາດ ຈາກສານ;

ພາຍຫລັງທີ່ໄດ້ເຊັນສັ່ງຈ່າຍແຊັກໄປແລ້ວ ຜູ້ສັ່ງຈ່າຍບໍ່ມີສິດຖອນເງິນຈໍານວນສັ່ງຈ່າຍຕາມໃບແຊັກອອກຈາກບັນຊີ ຫລື ຄັດຄ້ານຊຶ່ງຈະເຮັດໃຫ້ຜູ້ຖືແຊັກຖືກເສັຍປະໂຫຍດ, ເວັ້ນເສັຍແຕ່ກໍລະນີແຊັກຖືກລັກ, ເສັຍ, ຖືກທໍາລາຍ ຫລື ຖືກບັງຄັບໃຫ້ເຊັນແຊັກ ແລະ ຜູ້ໄດ້ຮັບແຊັກຍັງຢູ່ໃນພາວະຟື້ນຟູ ຫລື ລົ້ມລະລາຍ.

## ມາດຕາ 12. ຜູ້ຮັບແຊັກ

ຜູ້ຮັບແຊັກແມ່ນຜູ້ທີ່ໄດ້ຮັບແຊັກໂດຍກົງຈາກຜູ້ສັ່ງຈ່າຍ ຊຶ່ງສາມາດນໍາເອົາແຊັກໄປເບີກເອົາເງິນຈາກທະນາຄານ ຫລື ເຊັນສະຫລັກຫລັງຕໍ່ໃຫ້ຜູ້ອື່ນ.

## ມາດຕາ 13. ຜູ້ຈ່າຍເງິນ

ຜູ້ຈ່າຍເງິນແມ່ນທະນາຄານ ຫລື ສະຖາບັນການເງິນອື່ນ ຊຶ່ງແມ່ນບ່ອນຜູ້ສັ່ງຈ່າຍເປີດບັນຊີເງິນຝາກກະແສລາຍວັນ ຊຶ່ງໄດ້ຮັບຄໍາສັ່ງໃຫ້ຈ່າຍເງິນຕາມແຊັກ.

## ມາດຕາ 14. ຜູ້ຖືແຊັກ

ຜູ້ຖືແຊັກ ແມ່ນຜູ້ຄອບຄອງແຊັກຊຶ່ງອາດຈະແມ່ນຜູ້ຮັບແຊັກ, ຜູ້ຮັບໂອນແຊັກ ຫລື ຜູ້ຮັບຕໍ່ຊ່ວງສຸດທ້າຍ.

## ມາດຕາ 15. ທະນາຄານຮັບແຊັກ

ທະນາຄານຮັບແຊັກຫມາຍເຖິງທະນາຄານ ຫລື ສະຖາບັນການເງິນອື່ນ ບ່ອນຜູ້ຖືແຊັກນໍາເອົາແຊັກມາສະເຫນີ ເພື່ອໃຫ້ຮຽກເກັບເງິນ.

## ມາດຕາ 16. ສູນຊໍາລະແຊັກ

ສູນຊໍາລະແຊັກ ແມ່ນບ່ອນແລກປ່ຽນແຊັກຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນໆດ້ວຍກັນ.

## ມາດຕາ 17. ຜູ້ຄໍ້າປະກັນແຊັກ

ຜູ້ຄໍ້າປະກັນແຊັກ ແມ່ນຜູ້ຮັບປະກັນການຊໍາລະແທນຜູ້ສັ່ງຈ່າຍ ຫລື ຜູ້ສະຫລັກຫລັງແຊັກຕາມຄໍາຮຽກຮ້ອງຂອງຜູ້ຮັບ ຫລື ຜູ້ສັ່ງຈ່າຍແຊັກ. ແຊັກໃບດຽວອາດຈະຖືກຄໍ້າປະກັນໂດຍນິຕິບຸກຄົນ ຫລື ບຸກຄົນຜູ້ດຽວ ຫລື ຫລາຍຄົນ. ການຄໍ້າປະກັນອາດຈະຄໍ້າປະກັນຈໍານວນເງິນໃນແຊັກທັງຫມົດ ຫລື ສ່ວນໃດສ່ວນນຶ່ງ ການຄໍ້າປະກັນໃຫ້ຂຽນເນື້ອໃນຈະແຈ້ງໃສ່ໃບແຊັກ ຫລື ໃບຄັດຕິດແຊັກພ້ອມດ້ວຍລາຍເຊັນ.

## ໝວດທີ III

## ການໂອນແຊັກ

### ມາດຕາ 18. ການໂອນແຊັກ

ການໂອນແຊັກແມ່ນການມອບແຊັກຈາກບຸກຄົນໜຶ່ງໄປໃຫ້ອີກບຸກຄົນໜຶ່ງ ດ້ວຍການເຊັນສະຫລັກຫລັງ ຫລື ດ້ວຍການມອບໃຫ້ໂດຍບໍ່ມີການສະຫລັກຫລັງ. ການເຊັນສະຫລັກຫລັງແຊັກ ສາມາດເຊັນໄດ້ຫລາຍເທື່ອຕໍ່ເນື່ອງກັນ.

ການໂອນແຊັກໃຫ້ດຳເນີນພາຍໃນກຳນົດຮ້ອຍແປດສິບວັນນັບແຕ່ວັນສັ່ງຈ່າຍເປັນຕົ້ນໄປ. ແຊັກທີ່ຖືກປະຕິເສດບໍ່ຈ່າຍເງິນຈາກທະນາຄານ ຫລື ສະຖາບັນການເງິນອື່ນ ບໍ່ມີສິດໂອນໃຫ້ຜູ້ອື່ນຕື່ມອີກ.

### ມາດຕາ 19. ປະເພດແຊັກທີ່ໂອນໄດ້ດ້ວຍການສະຫລັກຫລັງ

ແຊັກທີ່ໂອນດ້ວຍການເຊັນສະຫລັກຫລັງແມ່ນ ແຊັກທີ່ຈ່າຍຕາມຄຳສັ່ງຊຶ່ງບົ່ງຊື່ຂອງຜູ້ຮັບເງິນ.

### ມາດຕາ 20. ປະເພດແຊັກທີ່ໂອນໄດ້ດ້ວຍການມອບ

ແຊັກທີ່ສາມາດໂອນໄດ້ລວມມີ:

- ມີການເຊັນສະຫລັກຫລັງ;
- ບໍ່ມີການເຊັນສະຫລັກຫລັງ.

ແຊັກທີ່ໂອນດ້ວຍການມອບໂດຍບໍ່ມີການເຊັນສະຫລັກຫລັງຫລືແຊັກເຊັນສະຫລັກຫລັງໂດຍບໍ່ມີການບົ່ງຊື່ແມ່ນແຊັກຊຶ່ງຜູ້ຖືແຊັກມີສິດນຳໄປເບີກເງິນຈາກທະນາຄານ ຫລື ສະຖາບັນການເງິນອື່ນໄດ້ໃນທັນທີ.

### ມາດຕາ 21. ເນື້ອໃນ ແລະ ເງື່ອນໄຂການໂອນແຊັກດ້ວຍການເຊັນສະຫລັກຫລັງ

ການໂອນແຊັກດ້ວຍການເຊັນສະຫລັກຫລັງ ແມ່ນການເຊັນສະຫລັກຫລັງໃສ່ໃບແຊັກໂດຍບົ່ງຊື່ ຫລື ບໍ່ບົ່ງຊື່ຜູ້ຮັບແຊັກ ແລະ ລົງວັນທີ.

ການໂອນແຊັກດ້ວຍການສະຫລັກຫລັງ ແມ່ນການໂອນເງິນທັງໝົດທີ່ບົ່ງໄວ້ໃນແຊັກໂດຍບໍ່ມີເງື່ອນໄຂ.

### ມາດຕາ 22. ຜູ້ໂອນແຊັກ

ຜູ້ໂອນແຊັກ ແມ່ນຜູ້ມອບແຊັກໃຫ້ຜູ້ອື່ນດ້ວຍການເຊັນສະຫລັກຫລັງ ຫລື ບໍ່ມີການເຊັນສະຫລັກຫລັງ.

**ມາດຕາ 23. ຜູ້ຮັບໂອນແຊັກດ້ວຍການເຊັນສະຫລັກຫລັງ**

ຜູ້ຮັບໂອນດ້ວຍການເຊັນສະຫລັກຫລັງ ແມ່ນຜູ້ໄດ້ຮັບແຊັກຕໍ່ຊ່ວງຈາກຜູ້ອື່ນດ້ວຍການເຊັນສະຫລັກຫລັງ.

ຜູ້ຮັບໂອນດ້ວຍການເຊັນສະຫລັກຫລັງອາດຈະແມ່ນບຸກຄົນດຽວ, ຫລາຍຄົນ ຫລື ນິຕິບຸກຄົນກໍໄດ້. ຜູ້ຮັບໂອນມີສິດໂອນຕໍ່ດ້ວຍການເຊັນສະຫລັກຫລັງໃຫ້ຜູ້ອື່ນອີກກໍໄດ້. ຜູ້ຮັບໂອນຕ້ອງນຳແຊັກໄປເບີກເງິນພາຍໃນກຳນົດໜຶ່ງຮ້ອຍແປດສິບວັນ ນັບແຕ່ວັນທີ່ຜູ້ສັ່ງຈ່າຍເຊັນແຊັກເປັນຕົ້ນໄປ.

**ມາດຕາ 24. ການຢັ້ງຢືນແຊັກ**

ທະນາຄານບ່ອນຈ່າຍເງິນສາມາດຢັ້ງຢືນແຊັກເພື່ອຄ້ຳປະກັນການຈ່າຍເງິນໃຫ້ແກ່ຜູ້ຮັບແຊັກຕາມຄຳຮ້ອງຂອງຜູ້ຮັບ ແລະ ຜູ້ສັ່ງຈ່າຍ.

ເມື່ອທະນາຄານໄດ້ຢັ້ງຢືນແຊັກແລ້ວ ຕ້ອງໄດ້ຫັກບັນຊີຂອງຜູ້ສັ່ງຈ່າຍເທົ່າກັບຈຳນວນເງິນທີ່ໄດ້ຢັ້ງຢືນໃນແຊັກນັ້ນໄວ້ເພື່ອລໍຖ້າການຈ່າຍ.

**ມາດຕາ 25. ການແຈ້ງຜ່ານແຊັກ**

ທະນາຄານບ່ອນຈ່າຍເງິນສາມາດຢັ້ງຢືນຜ່ານແຊັກວ່າໃນບັນຊີຂອງຜູ້ສັ່ງຈ່າຍມີເງິນຢ່າງແທ້ຈິງ ໃນເວລາທີ່ຜູ້ຖືແຊັກນຳແຊັກມາສະເໜີໃຫ້ທະນາຄານຢັ້ງຢືນຜ່ານ.

## ໝວດທີ IV

## ການຈ່າຍ ແລະ ການປະຕິເສດຈ່າຍ

**ມາດຕາ 26. ການຈ່າຍເງິນ**

ໃນເມື່ອທະນາຄານໄດ້ຮັບການສະເໜີຂໍເບີກເງິນຕາມແຊັກ, ທະນາຄານຕ້ອງກວດກາຄວາມຖືກຕ້ອງຂອງແຊັກເປັນຕົ້ນ: ລາຍເຊັນ ແລະ ການຕໍ່ເນື່ອງຂອງການເຊັນສະຫລັກຫລັງແຊັກ ແລະ ອື່ນໆ.

ໃນເມື່ອທະນາຄານໄດ້ຮັບການສະເໜີ ຂໍເບີກເງິນຕາມແຊັກ, ທະນາຄານຕ້ອງໄດ້ໃຫ້ຄຳຕອບວ່າຈະຈ່າຍຫລືປະຕິເສດການຈ່າຍເງິນ ພ້ອມທັງແຈ້ງເຫດຜົນຂອງການປະຕິເສດພາຍໃນກຳນົດສອງວັນລັດຖະການ ນັບແຕ່ມື້ໄດ້ຮັບການສະເໜີເປັນຕົ້ນໄປ.

ທະນາຄານທີ່ໄດ້ຮັບການສະເໜີໃຫ້ຈ່າຍເງິນ ມີພັນທະຕ້ອງຈ່າຍເງິນຕາມຈຳນວນທີ່ໄດ້ກຳນົດຢູ່ໃນແຊັກຂອງຜູ້ສັ່ງຈ່າຍ ຖ້າຈຳນວນເງິນທີ່ສັ່ງຈ່າຍ ຫາກມີພຽງພໍຢູ່ໃນບັນຊີ ແລະ ລາຍເຊັນຂອງຜູ້ສັ່ງຈ່າຍຖືກຕ້ອງ.

ໃນກໍລະນີເງິນຢູ່ໃນບັນຊີຂອງຜູ້ສັ່ງຈ່າຍຫາກບໍ່ພຽງພໍຕາມຈຳນວນເງິນທີ່ສັ່ງຈ່າຍໃນໃບແຊັກນັ້ນ ທະນາຄານ ມີສິດປະຕິເສດການຈ່າຍເງິນ.

## ມາດຕາ 27. ຜົນຂອງການຈ່າຍ

ເມື່ອທະນາຄານຜູ້ມີໜ້າທີ່ຈ່າຍເງິນ ຫາກເຫັນວ່າມີເງິນຢູ່ໃນບັນຊີຂອງຜູ້ສັ່ງຈ່າຍ ແລະ ໄດ້ຈ່າຍເງິນໃຫ້ຜູ້ສະເໜີຂໍເບີກເງິນຕາມແຊັກແລ້ວ ຖືວ່າພັນທະຂອງຜູ້ເຂົ້າຮ່ວມໃນແຊັກຕົກໄປ.

## ມາດຕາ 28. ການປະຕິເສດບໍ່ຈ່າຍເງິນ

ທະນາຄານບ່ອນຈ່າຍເງິນມີສິດປະຕິເສດການຈ່າຍເງິນໃນກໍລະນີທີ່ເຫັນວ່າແຊັກນັ້ນບໍ່ຖືກຕ້ອງຕາມກົດໝາຍເຊັ່ນ :

- ລາຍເຊັນຜູ້ສັ່ງຈ່າຍ ຫລື ຜູ້ໄດ້ຮັບມອບສິດບໍ່ຖືກຕ້ອງ;
- ແຊັກຜິດສັງເກດ ຫລື ມີຂໍ້ສົງໄສວ່າໄດ້ມາໂດຍບໍ່ຖືກຕ້ອງຕາມກົດໝາຍເຊັ່ນ ຜູ້ສັ່ງຈ່າຍຖືກບີບບັງຄັບໃຫ້ສັ່ງຈ່າຍ, ແຊັກຂີດຂ້າ, ເປິະເປື້ອນ, ແຊັກມີຂໍ້ສົງໄສວ່າປອມແປງຈຳນວນເງິນ ຫລື ມີຂໍ້ສົງໄສອື່ນໆ;
- ຜູ້ສັ່ງຈ່າຍບໍ່ມີສິດໃນການສັ່ງຈ່າຍ;
- ຜູ້ທີ່ໄດ້ຮັບມອບສິດສັ່ງຈ່າຍ, ເງິນທີ່ເກີນສິດຂອງຕົນໄດ້ຮັບມອບ;
- ຜູ້ໄດ້ຮັບມອບສິດສັ່ງຈ່າຍເງິນຜິດຈາກເປົ້າໝາຍທີ່ເຈົ້າຂອງບັນຊີໄດ້ຕົກລົງໄວ້ກັບທະນາຄານບ່ອນຈ່າຍເງິນ;
- ສະກຸນເງິນໃນແຊັກທີ່ສັ່ງຈ່າຍບໍ່ຖືກກັບສະກຸນເງິນທີ່ມີໃນບັນຊີເງິນຝາກ;
- ແຊັກມີລັກສະນະບໍ່ສົມບູນເຊັ່ນ : ແຊັກທີ່ເຊັນດ້ວຍສໍດຳ ຫລື ເຊັນຜ່ານເຈ້ຍກາກບອນ; ແຊັກບໍ່ມີວັນທີ ຫລື ຂາດຂໍ້ຄວາມໃດໜຶ່ງຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 4 ຂອງດຳລັດສະບັບນີ້;
- ແຊັກບໍ່ມີບັນຊີ ຫລື ບັນຊີຖືກປິດໄປແລ້ວ;
- ບັນຊີຂອງຜູ້ສັ່ງຈ່າຍຖືກຫັກໄວ້ດ້ວຍສາເຫດໃດໜຶ່ງ;
- ມີການຄັດຄ້ານການສັ່ງຈ່າຍດ້ວຍສາເຫດໃດໜຶ່ງ;
- ຜູ້ຖືແຊັກໄປສະເໜີເບີກເງິນບໍ່ໄດ້ຮັບການໂອນແຊັກດ້ວຍການເຊັນສະຫລັກຫລັງ ຫລື ການເຊັນສະຫລັກຫລັງບໍ່ຖືກຕ້ອງ;

ໃນບັນຊີສັ່ງຈ່າຍບໍ່ມີເງິນ ຫລື ຈຳນວນເງິນໃນບັນຊີມີບໍ່ພຽງພໍ ທະນາຄານມີສິດສົ່ງແຊັກຄືນໃຫ້ຜູ້ຖືແຊັກ ແລະ ຕັດສິດບໍ່ໃຫ້ນຳໃຊ້ແຊັກພາຍໃນໜຶ່ງປີ.

ເຫດຜົນຂອງການປະຕິເສດບໍ່ຈ່າຍເງິນຕາມແຊັກຈະຂຽນໃສ່ຢູ່ດ້ານໜ້າ ຫລື ດ້ານຫລັງຂອງໃບແຊັກ ຫລື ຈະຂຽນໃສ່ເອກະສານຕິດຄັດໃສ່ກັບໃບແຊັກກໍໄດ້.

**ມາດຕາ 29.** ການປະຕິເສດບໍ່ຈ່າຍເງິນໂດຍບໍ່ມີເຫດຜົນ

ທະນາຄານບ່ອນຈ່າຍເງິນທີ່ປະຕິເສດບໍ່ຈ່າຍເງິນຕາມແຊັກໂດຍບໍ່ມີເຫດຜົນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍຈາກການປະຕິເສດດັ່ງກ່າວ.

**ມາດຕາ 30.** ການແຈ້ງການປະຕິເສດບໍ່ຈ່າຍເງິນ

ຜູ້ສະເໜີຂໍເບີກເງິນຕາມແຊັກທີ່ຖືກປະຕິເສດຈາກທະນາຄານບ່ອນຈ່າຍເງິນມີພັນທະແຈ້ງໃຫ້ຜູ້ເຊັນສະຫລັກຫລັງແຊັກຜູ້ຖືດຕົ້ນນັ້ນຊາບພາຍໃນກຳນົດເຈັດວັນລັດຖະການນັບແຕ່ວັນໄດ້ຮັບແຈ້ງການປະຕິເສດບໍ່ຈ່າຍເງິນເປັນລາຍລັກອັກສອນເປັນຕົ້ນໄປແລະໃຫ້ປະຕິບັດເຊັ່ນດຽວກັນຕໍ່ໆໄປຈົນຮອດຜູ້ສັ່ງຈ່າຍ. ກໍລະນີຜູ້ເຂົ້າຮ່ວມການເຊັນສະຫລັກຫລັງຫາກບໍ່ແຈ້ງໃຫ້ຜູ້ຖືດຈາກຕົ້ນຊາບພາຍໃນ ກຳນົດຫ້າວັນລັດຖະການແລ້ວຕ້ອງຮັບຜິດຊອບຕໍ່ຜົນເສັຍຫາຍທີ່ເກີດຂຶ້ນທັງໝົດ ເວັ້ນເສັຍແຕ່ຜູ້ກ່ຽວມີເຫດຜົນຢັ້ງຢືນຢ່າງຖືກຕ້ອງຈາກອົງການທີ່ມີສິດອຳນາດ.

## ໝວດທີ V

## ການເສັຍ, ການລັກ, ການປອມແປງແຊັກ ແລະ ຂໍ້ບັງຄັບໃນການນຳໃຊ້ແຊັກ

**ມາດຕາ 31.** ການເສັຍ ແລະ ການລັກແຊັກ

ເມື່ອຜູ້ຖື ຫລື ຜູ້ສັ່ງຈ່າຍແຊັກ ຫາກໄດ້ເຮັດແຊັກເສັຍ ຫລື ແຊັກຖືກລັກ ຫລື ຖືກທຳລາຍຜູ້ກ່ຽວຕ້ອງແຈ້ງໃຫ້ທະນາຄານບ່ອນຈ່າຍເງິນຊາບໃນທັນທີ ເພື່ອສະເໜີບໍ່ໃຫ້ທະນາຄານຈ່າຍເງິນຕາມແຊັກໃບນັ້ນ ຊຶ່ງເອີ້ນວ່າ ການຄັດຄ້ານການຈ່າຍເງິນຕາມແຊັກ.

ທະນາຄານທີ່ໄດ້ຈ່າຍເງິນຕາມໃບແຊັກທີ່ຖືກລັກ ຫລື ຖືກເສັຍກ່ອນການຄັດຄ້ານຈະບໍ່ມີຄວາມຮັບຜິດຊອບຮ່ວມ ເວັ້ນເສັຍແຕ່ທະນາຄານບ່ອນຈ່າຍເງິນຫາກຈ່າຍເງິນເມື່ອເຫັນວ່າແຊັກນັ້ນຜິດປົກກະຕິ.

ໃນກໍລະນີທີ່ການຄັດຄ້ານການຈ່າຍເງິນຕາມແຊັກຫາກບໍ່ຖືກຕ້ອງຕາມກົດໝາຍຜູ້ຄັດຄ້ານ ຈະຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍ.

**ມາດຕາ 32.** ການປອມແປງແຊັກ

ຮູບການປອມແປງແຊັກມີດັ່ງຕໍ່ໄປນີ້ :

- ການສ້າງໃບແຊັກປອມ;

- ການປອມແປງຕົວເລກ ຫລື ການປອມແປງຈຳນວນເງິນທີ່ຂຽນເປັນຕົວໜັງສືໃນໃບແຊັກ;

- ການປອມແປງລາຍເຊັນ, ການປອມແປງຊື່ຜູ້ຮັບແຊັກ ແລະ ອື່ນໆ.

ຜູ້ປອມແປງແຊັກ,ຜູ້ທີ່ຮູ້ວ່າແຊັກຖືກປອມແປງແຕ່ຫາກເຊັນສະຫລັກຫລັງຕໍ່ໃຫ້ຜູ້ອື່ນ ຫລື ຄ້ຳປະກັນໃຫ້ຜູ້ອື່ນຈະມີຄວາມຮັບຜິດຊອບທາງອາຍາແລະໃຊ້ແທນຄ່າເສັຍຫາຍ.ຜູ້ທີ່ໄດ້ເຊັນແຊັກພາຍຫລັງການປອມແປງລ້ວນແຕ່ຕ້ອງໄດ້ຮັບຜິດຊອບຕໍ່ຈຳນວນເງິນທີ່ຖືກປອມແປງພ້ອມທັງຄ່າເສັຍຫາຍທີ່ເກີດຂື້ນ.

**ມາດຕາ 33.** ຂໍ້ບັງຄັບໃນການນຳໃຊ້ແຊັກ.

ການຊຳລະພາສີ, ອາກອນ, ຄ່າເຊົ່າ, ສຳປະທານ ແລະ ຄ່າທຳນຽມຕ່າງໆ ໃຫ້ງົບປະມານຂອງລັດ ຈະຈ່າຍເປັນເງິນສົດ, ແຊັກ ຫລື ເງິນໂອນກໍໄດ້, ແຕ່ຖ້າຫາກຈຳນວນເງິນຕ້ອງຈ່າຍແຕ່ລະຄັ້ງເທົ່າກັບ ຫລື ຫລາຍກວ່າ ສາມຮ້ອຍພັນກີບ, ຜູ້ຈ່າຍຊຶ່ງແມ່ນຫົວໜ່ວຍທຸລະກິດຈະຕ້ອງຊຳລະດ້ວຍແຊັກ ຫລື ເງິນໂອນ. ແຊັກເພື່ອການຊຳລະດັ່ງກ່າວຕ້ອງໄດ້ຮັບການຢັ້ງຢືນຈາກທະນາຄານທຸລະກິດ.

**ມາດຕາ 34.** ການຊຳລະລະຫວ່າງຫົວໜ່ວຍທຸລະກິດ.

ການຊຳລະດ້ານການຄ້າລະຫວ່າງຫົວໜ່ວຍທຸລະກິດດ້ວຍກັນ ທີ່ມີມູນຄ່າເທົ່າກັບ ຫລື ຫລາຍກວ່າ ຫ້າແສນກີບ ຈະຕ້ອງຊຳລະດ້ວຍແຊັກ ຫລື ເງິນໂອນ.

## ໝວດທີ VI

## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 35.** ການລະເມີດກ່ຽວກັບການນຳໃຊ້ແຊັກ

ການນຳໃຊ້ແຊັກທີ່ບໍ່ຖືກຕ້ອງ ສະແດງອອກດັ່ງນີ້ :

- ການສັ່ງຈ່າຍແຊັກໂດຍບໍ່ມີເງິນ;

- ການປະຕິເສດບໍ່ຍອມຈ່າຍເງິນຕາມແຊັກທີ່ບໍ່ຖືກຕ້ອງຕາມກົດໝາຍ;

- ການຄັດຄ້ານການຈ່າຍເງິນຕາມແຊັກທີ່ບໍ່ຖືກຕ້ອງຕາມກົດໝາຍ;
- ການປອມແປງແຊັກ;
- ການບັງຄັບໃຫ້ເຊັນແຊັກ;
- ການຈ່າຍເງິນຕາມແຊັກທີ່ບໍ່ຖືກຕ້ອງໂດຍເຈດຕະນາ;
- ຜູ້ລະເມີດຕໍ່ການຊໍາລະດ້ວຍແຊັກລະຫວ່າງທ້ອງໝ່ອຍທຸລະກິດ.

ມາດຕາ 36. ການສັ່ງຈ່າຍແຊັກໂດຍບໍ່ມີເງິນ

ບຸກຄົນໃດຫາກສັ່ງຈ່າຍແຊັກໂດຍບໍ່ມີເງິນໃນບັນຊີ ຫລື ເງິນບໍ່ຄົບຕາມຈໍານວນທີ່ຂຽນໄວ້ໃນແຊັກໂດຍເຈດຕະນາເພື່ອຊໍາລະໜີ້ສິນຂອງຕົນຈະຮັບຜິດຊອບ ຕາມມາດຕາ 140 ຂອງກົດໝາຍອາຍາ.

ມາດຕາ 37. ການປະຕິເສດບໍ່ຍອມຈ່າຍເງິນຕາມແຊັກໂດຍບໍ່ຖືກຕ້ອງຕາມກົດໝາຍ

ທະນາຄານບ່ອນຈ່າຍເງິນຫາກປະຕິເສດບໍ່ຈ່າຍເງິນໂດຍບໍ່ຖືກຕ້ອງຕາມກົດໝາຍໃຫ້ແກ່ຜູ້ມາສະເໜີຂໍເບີກເງິນຈະຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍ.

ມາດຕາ 38. ການຄັດຄ້ານການຈ່າຍເງິນຕາມແຊັກໂດຍບໍ່ຖືກຕ້ອງຕາມກົດໝາຍ

ບຸກຄົນໃດຫາກໄດ້ສັ່ງຈ່າຍແຊັກໄປແລ້ວແຕ່ໄປຄັດຄ້ານທະນາຄານເພື່ອບໍ່ໃຫ້ຈ່າຍເງິນໃຫ້ແກ່ຜູ້ຮັບເງິນໂດຍອ້າງເຫດຜົນວ່າແຊັກຖືກເສັຍ, ຖືກທໍາລາຍ ຫລື ຖືກລັກ ແລະ ອື່ນໆ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຕ້ອງໄດ້ຮັບຜິດຊອບຕາມ ມາດຕາ 111 ຂອງກົດໝາຍອາຍາ.

ມາດຕາ 39. ການປອມແປງແຊັກ

ບຸກຄົນໃດ ຫາກໄດ້ປອມແປງແຊັກ ເຊັ່ນ ປອມແປງລາຍເຊັນ, ປອມຊື່, ປອມແປງຈໍານວນເງິນໃນແຊັກ, ສ້າງແຊັກປອມ ແລະ ອື່ນໆຈະຕ້ອງຮັບຜິດຊອບຕາມມາດຕາ 140 ຂອງກົດໝາຍອາຍາ.

ມາດຕາ 40. ການບັງຄັບໃຫ້ເຊັນແຊັກ

ບຸກຄົນໃດບັງຄັບໃຫ້ຄົນອື່ນເຊັນແຊັກເພື່ອຜົນປະໂຫຍດຂອງຕົນຕ້ອງຮັບຜິດຊອບຕາມມາດຕາ 90 ຂອງກົດໝາຍອາຍາ.

ມາດຕາ 41. ການຈ່າຍເງິນຕາມແຊັກທີ່ບໍ່ຖືກຕ້ອງໂດຍເຈດຕະນາ

ບຸກຄົນໃດຫາກຈ່າຍເງິນຕາມແຊັກທີ່ບໍ່ຖືກຕ້ອງໂດຍເຈດຕະນາຈະມີຄວາມຮັບຜິດຊອບທາງອາຍາ ໃນສະຖານເປັນຜູ້ສົມຮູ້ຮ່ວມຄິດໃນການສໍ້ໂກງຊັບ ແລະ ຈະໄດ້ຮັບຜິດຊອບຕາມມາດຕາ 111 ຂອງກົດໝາຍອາຍາ.

ຖ້າຫາກໄດ້ຈ່າຍເງິນຕາມແຊັກທີ່ບໍ່ຖືກຕ້ອງດ້ວຍຄວາມບໍ່ເອົາໃຈໃສ່ຈະຕ້ອງໄດ້ໃຊ້ແທນຄ່າເສັຍຫາຍ.

**ມາດຕາ 42.** ຜູ້ລະເມີດຕໍ່ການຊໍາລະດ້ວຍແຊັກລະຫວ່າງທົວໜ່ວຍທຸລະກິດ

ຜູ້ລະເມີດຕໍ່ການຊໍາລະດ້ວຍແຊັກລະຫວ່າງທົວໜ່ວຍທຸລະກິດດ້ວຍກັນ ໂດຍອີງຕາມ **ມາດຕາ 34** ຂອງດຳລັດສະບັບນີ້ ຈະຖືກປັບໃໝທ້າສ່ວນຮ້ອຍຂອງຈຳນວນເງິນທີ່ໄດ້ລະເມີດ.

**ມາດຕາ 43.** ອາຍຸຄວາມໃນການຮ້ອງຟ້ອງ

ການຮ້ອງຟ້ອງທາງອາຍາກ່ຽວກັບການລະເມີດລະບຽບການໃນການນໍາໃຊ້ແຊັກໃຫ້ດໍາເນີນພາຍໃນກໍານົດໜຶ່ງປີນັບແຕ່ວັນທີ່ອາຍຸແຊັກໄດ້ສິ້ນສຸດລົງເປັນຕົ້ນໄປ; ສໍາຫລັບການຮ້ອງຟ້ອງທາງແພ່ງໃຫ້ດໍາເນີນພາຍໃນກໍານົດສອງປີນັບແຕ່ວັນທີ່ອາຍຸຂອງແຊັກໄດ້ສິ້ນສຸດລົງເປັນຕົ້ນໄປ.

## ໝວດທີ VII

## ບົດບັນຍັດສຸດທ້າຍ.

**ມາດຕາ 44.** ການຈັດຕັ້ງປະຕິບັດ

ມອບໃຫ້ທະນາຄານແຫ່ງ ສ ປ ປ ລາວ, ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງເປັນຜູ້ຈັດຕັ້ງປະຕິບັດດຳລັດສະບັບນີ້.

**ມາດຕາ 45.** ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ກຳນົດກົດລະບຽບທີ່ຂັດກັບດຳລັດສະບັບນີ້ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ 22 OCT 1996

ນາຍົກລັດຖະມົນຕີ.

ຄຳໄຕ ສີພັນດອນ